ວາລະສານ

# ກະສິກຳ ແລະ ປ່າໄມ້

ປະຈຳ ອາທິດວັນທີ 23 ຫາ 27 ກັນຍາ 2024



ພິທີສະເຫຼີມສະຫຼອງວັນວໍ່ໂລກ ປີ 2024

ຫ້ອງການກະຊວງກະສິກຳ ແລະ ປ່າໄມ້



# ພິທີສະເຫຼີມສະຫຼອງວັນວໍ່ໂລກ ປີ 2024

ພາບ-ຂ່າວໂດຍ: ພະແນກໂຄສະນາ ແລະ ຂ່າວສານ

ແຕ່ລະປີ ມີຄົນເສຍຊີວິດຍ້ອນພະຍາດວໍ້ 55.000 ກວ່າຄົນ ໂດຍສະເລ່ຍເກືອບທຸກໆ 10 ນາທີ ແມ່ນມີຄົນເສຍຊີວິດ 1 ຄົນ, ປະມານ 30-50% ຂອງຄົນເສຍຊີວິດຈາກພະຍາດນີ້ ແມ່ນເດັກນ້ອຍອາຍຸຕໍ່າກ່ວາ 15 ປີ; ສະເພາະຢູ່ທະວີບອາຊີແມ່ນມີ 31.000 ກວ່າຄົນ/ປີ ໃນນີ້ ສູງກວ່າໝູ່ ແມ່ນຢູ່ປະເທດອິນເດຍ ເສຍຊີວິດສະເລ່ຍ 20.000 ກວ່າຄົນ/ປີ. ສະເພາະຢູ່ ສປປ ລາວ ອີງໃສ່ການສັງລວມຂໍ້ມູນຈາກສູນວິເຄາະ ແລະ ລະບາດວິທະຍາກະຊວງສາທາລະນະສຸກເລີ່ມແຕ່ປີ 2012 ຫາເດືອນ ເມສາ ປີ 2024 ໄດ້ຮັບການລາຍງານກໍລະນີສົງໄສພະຍາດວໍ້ໃນຄົນທັງໝົດ 328 ກໍລະນີ, ເສຍຊີວິດ 65 ກໍລະນີ, ອັດຕາຄວາມຮ້າຍແຮງເທົ່າກັບ 20% ເມື່ອທຽບໃສ່ກໍລະນີສົງໄສໃນທົ່ວປະເທດ. ເພື່ອເປັນການລະດົມມວນຊົນ ໃຫ້ເຫັນຄວາມສຳຄັນຂອງວັນດັ່ງກ່າວ.

ສະນັ້ນ, ໃນວັນທີ 27 ກັນຍາຜ່ານມານີ້ ທີ່ພະແນກກະສິກຳ ແລະ ປ່າໄມ້ ໄດ້ຈັດພິທີສະເຫຼີມສະຫຼອງວັນວໍ່ໂລກ ປີ 2024, ພາຍໃຕ້ການສະໜັບສະໜູນ ຂອງອົງການອານາໄມໂລກ (WHO), ອົງການອາຫານ ແລະ ການເສດ (FAO) ແລະ ອົງການ ພັດທະນາສາກົນປະເທດສະຫະລັດອາເມລິກາ (USAID). ໂດຍການໃຫ້ກຽດເປັນທານໂດຍ ທ່ານ ສົມຈິດ ຈັນທະວົງ ຮອງເຈົ້າແຂວງ ໄຊຍະບູລີ, ມີແຂກຈາກ ສອງກະຊວງ, ແຂກທີ່ຖືກເຊີນ,

ພະນັກງານ, ນ້ອງນັກຮຽນ ເຂົ້າຮ່ວມພ້ອມດ້ວຍປະຊາຊົນນໍາສັດລ້ຽງຂອງຕົນມາສັກຢາວັກຊີນ ຢ່າງເປັນຂະບວນຟົດຟື້ນ.

ພະຍາດວໍ້ ເປັນພະຍາດທີ່ມີການເຝົ້າລະວັງຮ່ວມກັນ ລະຫວ່າງ 2 ກະຊວງ ຄື: ກະຊວງກະສິກໍາ ແລະ ປ່າໄມ້ ແລະ ກະຊວງສາທາລະນະສຸກ, ເປັນພະຍາດທີ່ອັນຕະລາຍຮ້າຍແຮງ ທີ່ເກີດຈາກເຊື້ອຈຸລະໂລກຊະນິດໜຶ່ງ ທີ່ມີຊື່ວ່າ ເລບີ ໄວລັດ (Rabies virus), ສາຍພັນ ລີຊາ ໄວລັດ (Lyssa virus); ເຊິ່ງສາມາດຕິດຕໍ່ຈາກສັດສູ່ຄົນ ແລະ ສັດເລືອດອຸ່ນ ຈໍາພວກ: ໝາ, ແມວ, ງົວ, ຄວາຍ, ລີງ, ທະນີ, ກະຮອກ, ກະແຕ, ເສືອ, ໝີ, ໝູ ແລະ ເຈຍ ລວມທັງຄົນເຮົາ; ແຕ່ວ່າ 99 % ມັກເກີດກັບໝາ. ບໍ່ວ່າຄົນ ຫຼື ສັດ ຖ້າຫາກໄດ້ຮັບເຊື້ອພະຍາດວໍ້ ຈະບໍ່ສາມາດປິ່ນປົວໃຫ້ຫາຍດີ ແຕ່ກໍ່ສາມາດປ້ອງກັນໄດ້ດ້ວຍການນໍາເອົາ ໝາ-ແມວ ຂອງພວກທ່ານໄປສັກວັກຊີນກັນວໍ້; ໃນວັນທີ 28 ກັນຍາ ຂອງທຸກໆປີ ທ່ານສາມາດນໍາເອົາໝາ-ແມວ ໄປສັກວັກຊີນກັນວໍ້ ໂດຍບໍ່ໄດ້ເສຍຄ່າ ຢູ່ຕາມສະຖານທີ່ງທາງແຂວງ ແລະ ເມືອງ ໄດ້ກໍານົດໄວ້.




ຄະນະຮັບຜິດຊອບ:
ທ່ານ ສີປະໄພ ໄຊສົງຄາມ
ທ່ານ ສີສະຫວາດ ທອນດາລາ

ບັນນາທິການ:
ທ່ານ ກິດຊະນະ ພົມມະຈັນ
ທ່ານ ໂຊລາ ສົມມະລາວົງ
ທ່ານ ນ. ທອງພຸດ ວົງພະຈັນ
ທ່ານ ນ. ຄໍາແພງ ເກສອນ

ຈັດໜ້າອອກແບບໂດຍ:
ທ່ານ ນ. ສີອໍາມອນ ໄຊຍະລາດ

ຕິດຕໍ່ ແລະ ລົງໂຄສະນາໄດ້ທີ່: ພະແນກໂຄສະນາ ແລະ ຂ່າວສານ, ຫ້ອງການກະຊວງ 021 410154;
website: www.maf.gov.la;
Facebook: ຂາວສານກະສິກໍາ, ປ່າໄມ້ ແລະ ພັດທະນາຊົນນະບົດ;
Youtube: ລາຍການກະສິກໍາ;ແລະ ປ່າໄມ້;